COUNT US IN 2020

There's Power In Being Counted

ASIAN AMERICANS ADVANCING JUSTICE

COUNTUSIN2020.ORG

# ການສຳຫຼວດສຳມະໂນຄົວປີ 2020 ຖາມຫຍັງແດ່?

***ມີຄຳຖາມບໍ? ໂທຫາເບີສາຍດ່ວນການສຳຫຼວດສຳມະໂນຄົວຂອງພວກເຮົາໄດ້ທີ່ເບີ 844-2020-API ສຳລັບພາສາອັງກິດ ແລະ ພາສາອື່ນໆ. ສຳລັບຂໍ້ມູນເພີ່ມເຕີມ, ເຂົ້າເບິ່ງເວັບໄຊທ໌ www.CountUsIn2020.org/hotline***

ການສຳຫຼວດສຳມະໂນຄົວເລີ່ມຕົ້ນໃນເດືອນມີນາ 2020! ການຕອບການສຳຫຼວດສຳມະໂນຄົວກໍ່ເພື່ອໃຫ້ແນ່ໃຈວ່າຄອບຄົວແລະຊຸມຊົນຂອງທ່ານໄດ້ຮັບສ່ວນແບ່ງຊັບພະຍາກອນ, ການບໍລິການແລະການເປັນຕົວແທນຂອງລັດຖະບານຢ່າງຍຸດຕິທຳ.

ເລີ່ມຕົ້ນໃນກາງເດືອນມີນາ 2020, ທ່ານສາມາດຕອບການສຳຫຼວດສຳມະໂນຄົວໄດ້ທາງອອນໄລນ໌ ທາງໂທລະສັບ ຫຼື ທາງໄປສະນີ.ແຕ່ລະຄົວເຮືອນ (ຄົວເຮືອນປະກອບມີທຸກໆ ຄົນທີ່ອາໃສຢູ່ໃນນັ້ນ) ຄວນຕ້ອງສົ່ງ ***ຫນຶ່ງ*** ແບບຟອມ, ແລະຄວນລະບຸທຸກຄົນທີ່ອາໃສຢູ່ທີ່ຢູ່ນັ້ນ.

## ການສຳຫຼວດສຳມະໂນຄົວປີ 2020 ຈະຖາມກ່ຽວກັບຄົວເຮືອນຂອງທ່ານ:

<table>
<tr><td>ຈຳນວນຄົນໃນຄົວເຮືອນໃນວັນທີ 1 ເມສາ.</td><td>ລວມທຸກຄົນໃນເຮືອນຂອງທ່ານ, ເຖິງແມ່ນວ່າພວກເຂົາບໍ່ກ່ຽວຂ້ອງກັບທ່ານ. ການສຳຫຼວດສຳມະໂນຄົວນັບທຸກຄົນທີ່ຢູ່ໃນສະຫະລັດ, ລວມທັງເດັກນ້ອຍ, ຄົນທີ່ບໍ່ແມ່ນພົນລະເມືອງ, ຜູ້ເຊົ່າ - ທຸກຄົນ.</td></tr>
<tr><td colspan="2">ທ່ານເປັນເຈົ້າຂອງເຮືອນຫຼືເຊົ່າເຮືອນຢູ່?</td></tr>
<tr><td>ເບີໂທລະສັບ</td><td>ນີ້ຈະຖືກນຳໃຊ້ເພື່ອທຸລະກິດຂອງກົມສຳຫຼວດສຳມະໂນຄົວຢ່າງເປັນທາງການ ຖ້າຈຳເປັນເທົ່ານັ້ນ.</td></tr>
</table>

## ການສຳຫຼວດສຳມະໂນຄົວປີ 2020 ຈະຖາມກ່ຽວກັບຄົນທີ່ຢູ່ໃນຄົວເຮືອນຂອງທ່ານ:

<table>
<tr><td colspan="2">ຊື່, ເພດ, ອາຍຸ, ແລະວັນເດືອນປີເກີດຂອງແຕ່ລະຄົນໃນຄົວເຮືອນ</td></tr>
<tr><td colspan="2">ຄວາມສຳພັນກັບບຸກຄົນທີ່ເຮັດປະກອບແບບຟອມ.</td></tr>
<tr><td>ເຊື້ອຊາດ</td><td>ທ່ານສາມາດເລືອກຫນຶ່ງຫຼືຫຼາຍເຊື້ອຊາດກໍ່ໄດ້. ຖ້າທ່ານລະບຸວ່າຕົນເອງເປັນຄົນຫຼາຍເຊື້ອຊາດ ທ່ານສາມາດຫມາຍກ່ອງດຽວຫຼືຫຼາຍກ່ອງສຳລັບເຊື້ອຊາດຂອງທ່ານແລະຂຽນລາຍລະອຽດເພີ່ມເຕີມກ່ຽວກັບພື້ນຫລັງເຊື້ອຊາດຂອງທ່ານ.<br><br>ບໍ່ໄດ້ມີກ່ອງໃຫ້ຫມາຍໄດ້ທຸກກຸ່ມເຊື້ອຊາດ. ຖ້າກຸ່ມເຊື້ອຊາດຂອງທ່ານບໍ່ໄດ້ມີລະບຸໄວ້, ທ່ານສາມາດຂຽນລາຍລະອຽດເພີ່ມເຕີມກ່ຽວກັບພື້ນຫລັງເຊື້ອຊາດຂອງທ່ານໄດ້.</td></tr>
</table>

| | |
|---|---|
| ມາຈາກຣິສແປນິກ | *ມາຈາກຣິສແປນິກຖືວ່າເປັນຊົນເຜົ່າ, ບໍ່ແມ່ນເຊື້ອຊາດ .*<br><br>*ທ່ານສາມາດ ຫມາຍວ່າທ່ານບໍ່ແມ່ນຜູ້ມີເຊື້ອສາຍຊົນເຜົ່າຮິສແປນິກ, ຫຼືຫມາຍວ່າທ່ານເປັນຄົນຣິສແປນິກແລະໃສ່ຫມາຍເຫດເຊື້ອສາຍຊົນເຜົ່າຂອງທ່ານ.* |

ແບບຟອມນີ້ຈະບໍ່ຖາມກ່ຽວກັບການເຂົ້າເມືອງ ຫຼື ສັນຊາດ ຫຼື ການເປັນພົນລະເມືອງຂອງທ່ານ.
ແບບຟອມກໍ່ຍັງຈະບໍ່ຂໍເອົາເລກປະກັນສັງຄົມຂອງທ່ານ.

## ການເຂົ້າຮ່ວມໃນການສຳຫຼວດສຳມະໂນຄົວນີ້ປອດໄພບໍ?

ຄຳຕອບການສຳຫຼວດສຳມະໂນຄົວຂອງທ່ານເປັນຄວາມລັບ. ກົມສຳຫຼວດສຳມະໂນຄົວ ບໍ່ໄດ້ຮັບອະນຸຍາດໃຫ້ແບ່ງປັນຂໍ້ມູນສ່ວນບຸກຄົນຂອງທ່ານກັບອົງກອນອື່ນໆ ຂອງລັດຖະບານ, ພະນັກງານກວດຄົນເຂົ້າເມືອງຫຼືຕໍ່ສາທາລະນະ .

ກົດຫມາຍຂອງລັດຖະບານກາງກຳນົດໃຫ້ທຸກຄົນເຂົ້າຮ່ວມໃນການສຳຫຼວດສຳມະໂນຄົວແລະຕອບຄຳຖາມທັງຫມົດ. ຢ່າຕົວະເວລາທີ່ຕອບການສຳຫຼວດສຳມະໂນຄົວ. ຖ້າທ່ານຂ້າມຄຳຖາມຂໍ້ດຽວ ແບບຟອມຂອງທ່ານກໍ່ຈະຍັງຖືກນັບ.
ຕອບການສຳຫຼວດສຳມະໂນຄົວໃຫ້ສົມບູນທີ່ສຸດເທົ່າທີ່ຈະເປັນໄປໄດ້ຈະຊ່ວຍຮັບປະກັນໄດ້ວ່າຜູ້ສຳຫຼວດສຳມະໂນຄົວບໍ່ຕ້ອງໄດ້ມາເຮືອນຂອງທ່ານເພື່ອຂໍເອົາຂໍ້ມູນທີ່ຂາດໄປ!

*ທ່ານສາມາດຫາຂໍ້ມູນເພີ່ມເຕີ່ມກ່ຽວກັບການສຳຫຼວດສຳມະໂນຄົວໄດ້ທີ່ www.CountUsIn2020.org/resources.*